# ແຜນງານນຳໃຊ້ໃນປະເທດລາວ

1. ການນຳໃຊ້

1.1 ເອກະສານນີ້ປະກອບເປັນແຜນງານປະຈຳປະເທດໜຶ່ງດັ່ງທີ່ໄດ້ອ້າງອີງເຖິງໃນເງື່ອນໄຂການທະນາຄານລວມຂອງ ANZ ແລະກຳນົດບັນດາເງື່ອນໄຂສະເພາະປະເທດທີ່ທະນາຄານສະໜອງໃຫ້ແກ່ລູກຄ້າຂອງຕົນໜຶ່ງ ຫຼື ຫຼາຍບັນຊີ ຫຼື ການບໍລິການໃນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

1.2 ແຜນສະເພາະປະເທດນີ້ເຮັດໃຫ້ເງື່ອນໄຂການທະນາຄານລວມຂອງ ANZ ມີຄວາມອຸດົມສົມບູນຂຶ້ນ. ບັນດາຄຳເວົ້າທີ່ເປັນອັກສອນໃຫຍ່ທີ່ນຳໃຊ້ໃນແຜນສະເພາະປະເທດນີ້ມີຄວາມໝາຍດັ່ງທີ່ໄດ້ນິຍາມໃນແຜນວ່າດ້ວຍຄຳນິຍາມທີ່ປະກອບເຮັດໃຫ້ເງື່ອນໄຂການທະນາຄານລວມຂອງ ANZ ມີຄວາມສົມບູນຂຶ້ນ.

2 ເງື່ອນໄຂການທະນາຄານລວມຂອງ ANZ

2.1 ການແລກປ່ຽນເງິນຕາແລະການສົ່ງລາຍຮັບ. ທະນາຄານຈະບໍ່ມີພັນທະໃນການດຳເນີນການແລກປ່ຽນເງິນ ຫຼື ສົ່ງລາຍຮັບທີ່ພົວພັນກັບການດຳເນີນບັນຊີ ຫຼື ການໃຫ້ບໍລິການ (ລວມທັງການດຳເນີນການຊຳລະນານາຊາດແລະການສະໜອງການບໍລິການສະພາບຄ່ອງທີ່ກ່ຽວຂ້ອງ) ຖ້າຫາກວ່າແລະໃນຂອບເຂດທີ່ມັນບໍ່ໄດ້ຮັບອະນຸຍາດພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ. ໃນເມື່ອການແລກປ່ຽນເງິນ ຫຼື ການໂອນສົ່ງເງິນດັ່ງກ່າວບໍ່ໄດ້ຮັບອະນຸຍາດຕາມກົດໝາຍທີ່ກ່ຽວຂ້ອງ ທະນາຄານອາດຈະໂດຍບໍ່ຂັດກັບສິດໃດໜຶ່ງຂອງກົດໝາຍສະບັບນີ້ ດຳເນີນການເຄື່ອນໄຫວທາງເລືອກອື່ນຕາມທີ່ເຫັນວ່າເໝາະສົມ. ລູກຄ້າດຳເນີນແລະຮັບຮອງຕໍ່ທະນາຄານວ່າຄຳສັ່ງໃດໜຶ່ງທີ່ຕົນເອງສົ່ງໄປໃຫ້ທະນາຄານທີ່ພົວພັນກັບການແລກປ່ຽນເງິນ ຫຼື ການໂອນສົ່ງເງິນຈະ, ຖ້າຫາກໄດ້ປະຕິບັດຕາມແລ້ວ, ຈະບໍ່ສົ່ງຜົນສະທ້ອນໃຫ້ເປັນການລະເມີດກົດໝາຍທີ່ກ່ຽວຂ້ອງໃດໜຶ່ງ.

2.2 ອັດຕາແລກປ່ຽນ. ອັດຕາແລກປ່ຽນລະຫວ່າງເງິນກີບລາວ ແລະ ເງິນຕ່າງປະເທດໃດໜຶ່ງທີ່ທະນາຄານແລກປ່ຽນເງິນສົດໃຫ້ລູກຄ້າທີ່ພົວພັນກັບການດຳເນີນບັນຊີ ຫຼື ການສະໜອງການບໍລິການ ຈະຢູ່ພາຍໃນຂອບເຂດອັດຕາແລກປ່ຽນທີ່ສາມາດຍອມຮັບໄດ້ຕາມກົດໝາຍ.

2.3 ການເປີດເຜີຍຂໍ້ມູນຂ່າວສານ. ລູກຄ້າອາດຈະໂດຍການສະໜອງໃຫ້ທະນາຄານແຈ້ງການເປັນລາຍລັກອັກສອນກ່ອນໜ້າສາມສິບຫ້າ (35) ມື້ເພື່ອຖອນສິດທີ່ລູກຄ້າໃຫ້ອະນຸຍາດໃຫ້ທະນາຄານເປີດເຜີຍຂໍ້ມູນຂ່າວສານພາຍໃຕ້ເງື່ອນໄຂ 9.1 ໄປຫາບຸກຄົນທີ່ລະບຸໃນເງື່ອນໄຂ 9.1(a) ຫາ 9.1(e). ພາຍຫຼັງຖອນສິດດັ່ງກ່າວແລ້ວ ທະນາຄານມີສິດທີ່ຈະຍົກເລີກບັນຊີ ຫຼື ການບໍລິການຕາມເງື່ອນໄຂດັ່ງກ່າວ.

2.4 ການປົກຄອງ. ໃນເວລາໃດໜຶ່ງຕາມທີ່ເງື່ອນໄຂ 14 ກຳນົດ, ລະບົບການປົກຄອງໃດໜຶ່ງທີ່ກ່ຽວຂ້ອງກັບປະເດັນໃນສປປ ລາວ, ທະນາຄານແລະລູກຄ້າສົ່ງໄປໃຫ້ມີການໄກ່ເກ່ຍທີ່ມີຜົນສັກສິດໃນຫ້ອງການແກ້ໄຂຂໍ້ຂັດແຍ້ງທາງເສດຖະກິດພາຍໃຕ້ກົດໝາຍວ່າດ້ວຍຂໍ້ຂັດແຍ່ງທາງເສດຖະກິດ.

3 ແຜນການບໍລິການການຊຳລະ. ການບໍລິການສະວິບຂ້າມຊາຍແດນ. ທະນາຄານຈະບໍ່ສະໜອງການບໍລິການສະວິບຂ້າມຊາຍແດນໃນ ສປປ ລາວ.

4 ການຮັບປະກັນເພີ່ມເຕີມ. ເປັນໜຶ່ງໃນເງື່ອນໄຂຂອງການສະໜອງບັນຊີ ຫຼື ສະໜອງການບໍລິການຂອງທະນາຄານ ANZ ລູກຄ້າຕົກລົງວ່າຈະເຮັດທຸກສິ່ງທຸກຢ່າງ ໃນການດຳເນີນເອກະສານແລະເຮັດສຳເລັດທຸກໆຂັ້ນຕອນ

ທາງການທີ່ຈຳເປັນເພື່ອເຮັດໃຫ້ທະນາຄານ ສາມາດສະໜອງບັນຊີ ແລະ ສະໜອງການ ບໍລິການຕາມກົດໝາຍແລະຫຼັກການຂອງສປປ ລາວ.

5 ASP222. ທະນາຄານ ANZ ປະເທດລາວ ຈຳກັດ (ANZLL) ແມ່ນສາຂາຂອງກຸ່ມທະ ນາຄານອົດສະຕຣາລີ ແລະ ນີວຊີແລນຈຳ ກັດ (ANZBGL). ANZBGL ສ້າງຕັ້ງຂຶ້ນຢູ່ ທີ່ປະເທດອົດສະຕຣາລີແລະເປັນສະຖາບັນຮັບ ຝາກເງິນທີ່ໄດ້ຮັບອະນຸຍາດ ພາຍໃຕ້ກົດໝາຍ ຂອງປະເທດອົດສະຕຣາລີ. ANZLL ໄດ້ຮັບ ການສ້າງຕັ້ງຂຶ້ນແລະຈົດທະບຽນຢູ່ສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ ມີໜີ້ສິນຈຳກັດ ແລະ ບໍ່ແມ່ນທະນາຄານທີ່ຢູ່ ພາຍໃຕ້ກົດໝາຍຂອງປະເທດອົດສະຕຣາລີ. ເງິນຝາກ ຫຼື ພັນທະໜີ້ສິນທີ່ ANZLL ບໍ່ ແມ່ນເງິນຝາກ ຫຼື ພັນທະໜີ້ສິນໃດໜຶ່ງຂອງ ANZBGL ຫຼື ຂອງບໍລິສັດໃນກຸ່ມຂອງມັນ, ແລະ ບໍ່ມີໃຜຜູ້ໜຶ່ງຢືນຢູ່ເບື້ອງຫຼັງ ຫຼື ຮັບປະ ກັນໃຫ້ແກ່ ANZLL.